Savan PAD ຈົດໝາຍແຈ້ງຂ່າວ

15 ມິຖຸນາ, 2020

14

## ຕິດຕາມ & ປະເມີນໂດຍພະນັກງານ ກປຂ. - ແຕ່ລະເຂດແມ່ນໄດ້ຮັບຜົນດີ

ສໍາລັບການເພີ່ມລາຍຮັບໃຫ້ຊາວນາ, ໂຄງການໄດ້ສຸມໃສ່ໃນດ້ານຊົນລະປະທານ, ດ້ານສົ່ງເສີມ (ຂອງການປູກຝັງ) ແລະ ການຕະຫຼາດນັບແຕ່ເລີ່ມຕົ້ນ. ທີມງານຕິດຕາມ ແລະ ປະເມີນຜົນປະກອບມີ ພະແນກກະສິກໍາ ແລະ ປ່າໄມ້ແຂວງ (ກປຂ.) ແລະ ພະແນກແຜນການ ແລະ ການລົງທຶນ(ພຜທ.ສຂ) ແຂວງສະຫວັນນະເຂດຕິດຕາມກວດກາເປັນແຕ່ລະໄລຍະດັ່ງນີ້: ໄດ້ເຫັນຜົນຮັບຫຍັງແນ່,ໝາກຜົນທີ່ປະກອບສ່ວນເຂົ້າໃນການພັດທະນາທ້ອງຖິ່ນມີຫລາຍປານໃດ, ແລະ ບໍ່ວ່າຈະເປັນແນວຄິດລິເລີ່ມໃນການສ້າງຕັ້ງລະບົບໂດຍກຸ່ມຜູ້ນໍາໃຊ້ນໍ້າ ແລະ ກຸ່ມຊາວນາ ທີ່ໄດ້ຮັບການສະໜັບສະໜູນທາງດ້ານເຕັກນິກຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ (ກປມ.) ດັ່ງຫຼາຍໆຜົນຮັບທີ່ໄດ້ເຫັນ ໂດຍຜ່ານກິດຈະກໍາການຕິດຕາມ, ໃນຄັ້ງນີ້ພວກເຮົາຈະລາຍງານກໍລະນີຂອງກຸ່ມເປົ້າໝາຍໜອງບົວຫຼວງ ແລະ ເຊສາລະລອງ. ກຸ່ມເປົ້າໝາຍເຫຼົ່ານັ້ນຄາດວ່າຈະເປັນໂຄງການຕົວແບບໃນອະນາຄົດມໍ່ໆນີ້.

### 1. ໂຄງການໜອງບົວຫຼວງ, ເມືອງຊົນນະບູລີ.

ເນື້ອທີ່ການຜະລິດ 200ຮຕ,120 ຄົວເຮືອນ




ໂຄງການໄດ້ເລີ່ມຊ່ວຍເຫຼືອທາງດ້ານເຕັກນິກໃນເຂດໂຄງການນີ້ຕັ້ງແຕ່ເດືອນ ມິຖຸນາ ປີ2018 ຫຼັກໆແມ່ນການສົ່ງເສີມ ເຕັກນິກການປູກເຂົ້າພາຍໃຕ້ນະໂຍບາຍກູ້ຢືມແນວພັນເຂົ້າ ແລະປຸ໋ຍ, ການແນະນໍາການປູກຜັກທີ່ຍືນຍົງ ແລະ ປອດໄພທົດແທນການປູກມັນຕົ້ນເຊິ່ງເປັນເຫດໃຫ້ດິນເຊື່ອມຄຸນນະພາບ ແລະ ເຮັດໃຫ້ຜົນຜະລິດຫຼຸດລົງເມື່ອບໍ່ດົນມານີ້, ແລະ ສ້າງຄວາມເຂັ້ມແຂງໃນການຈັດການນໍ້າ ແລະ ການບໍາລຸງຮັກສາລະບົບຊົນລະປະທານ. ຜ່ານຄວາມພະຍາຍາມຫຼາຍຢ່າງ ພວກເຮົາຈິ່ງໄດ້ຮັບຜົນດີເຊັ່ນ: ສະມັດຕະພາບເຂົ້າເພີ່ມຂຶ້ນ, ເລີ່ມມີການປູກພືດຜັກ ແລະ ການຂາຍ, ເນື້ອທີ່ຊົນລະປະທານເພີ່ມຂຶ້ນ. ເຊື່ອຢ່າງຍິ່ງວ່າ, ຜົນໄດ້ຮັບທີ່ກ່າວມານັ້ນກໍາລັງຊ່ວຍໃຫ້ພວກເຮົາເຂົ້າໃກ້ເປົ້າໝາຍຂອງໂຄງການຫຼາຍຂຶ້ນ ນັ້ນກໍ່ຄືການເພີ່ມລາຍຮັບໃຫ້ແກ່ຊາວນາ.

#### ຜົນຮັບທີ່ເຫັນໃນເຂດນີ້

**ດ້ານການສົ່ງເສີມ (ການປູກເຂົ້າ)**

ການປະຕິບັດເຕັກນິກການປູກເຂົ້າ



ຊ້າຍ :ວິທີທີ່ໂຄງການແນະນໍາ
ຂວາ : ວິທີດັ່ງເດີມຂອງຊາວນາ

ຜົນຜະລິດເພີ່ມຂຶ້ນ
(ລາຍຮັບເພີ່ມຂຶ້ນ)

**ດ້ານການຕະຫຼາດ**

ການແນະນໍາການປູກຜັກ



ແນະນໍາການປູກຜັກໃນເຮືອນຮົ່ມ

ສາມາດສ້າງແຫຼ່ງລາຍຮັບໃໝ່ໄດ້ແລ້ວ

**ດ້ານຊົນລະປະທານ**

ສ້າງຄວາມເຂັ້ມແຂງໃນການຈັດການນໍ້າ



ການສ້າງຄອງເໝືອງໃໝ່

ເນື້ອທີ່ຊົນລະປະທານເພີ່ມຂຶ້ນ
(ຜົນຜະລິດເພີ່ມຂຶ້ນ)

ສຽງຈາກຊາວນາ: ຍ້ອນວ່າພວກເຮົາມີໂອກາດເຮັດໃຫ້ລາຍຮັບເພີ່ມຂຶ້ນ....ດັ່ງນັ້ນ.

- ການເງິນຂອງພວກເຮົາສະດວກສະບາຍຫຼາຍຂຶ້ນ, ແລະ ສາມາດມີເງິນເກັບ
- ຂ້ອຍສາມາດຊ່ວຍຄອບຄົວ ແລະ ຍາດຕິພີ່ນ້ອງໄດ້ເມື່ອພວກເຂົາມີປັນຫາທາງດ້ານການເງິນ.
- ພວກເຮົາມີແຮງຈູງໃຈສູງໃນການຜະລິດ ແລະ ໃນການລົງທຶນສໍາລັບການຂະຫຍາຍການປູກພືດໃນເຮືອນຮົ່ມເພື່ອໃຫ້ມີລາຍໄດ້ເພີ່ມຂຶ້ນ.




## 2. ໂຄງການເຊສາລະລອງ, ເມືອງທ່າປາງທອງ

ເນື້ອທີ່ການຜະລິດ 2,000 ຮຕ, 350 ຄົວເຮືອນ

ໂຄງການໄດ້ເລີ່ມຊ່ວຍເຫຼືອທາງດ້ານເຕັກນິກໃນເຂດໂຄງການນີ້ຕັ້ງແຕ່ເດືອນ ມິຖຸນາປີ 2018 ຫຼັກໆແມ່ນການ ສົ່ງເສີມເຕັກນິກການປູກເຂົ້າພາຍໃຕ້ນະໂຍບາຍກູ້ຢືມແນວພັນເຂົ້າ ແລະປຸ໋ຍ, ການແນະນຳການປູກຜັກ ແລະ ສົ່ງເສີມການຂາຍຜັກເຫຼົ່ານັ້ນ ແລະ ສ້າງຄວາມເຂັ້ມແຂງໃນການຈັດການນ້ຳ ແລະ ການບຳລຸງຮັກສາລະບົບຊົນລະປະທານ. ຍ້ອນກິດຈະກຳດັ່ງກ່າວ, ຜົນຮັບທີ່ດີສາມາເຫັນໄດ້ໃນປະຈຸບັນເຊັ່ນວ່າ: ສະມັດຕະພາບເຂົ້າເພີ່ມຂຶ້ນ, ເລີ່ມມີການປູກ ແລະ ການຂາຍພືດຜັກ, ແລະ ການຂະຫຍາຍເນື້ອທີ່ຊົນລະປະທານນັ້ນຂ້ອນຂ້າງໂດດເດັ່ນທີ່ສຸດ. ເຊັ່ນດຽວກັນກັບໂຄງການໜອງບົວຫຼວງ, ສິ່ງເຫຼົ່ານີ້ເປັນສິ່ງສຳຄັນໃນການປະກອບສ່ວນເພື່ອເພີ່ມລາຍຮັບຂອງຊາວນາ.

### ຜົນຮັບທີ່ເຫັນໃນເຂດນີ້

**ດ້ານການສົ່ງເສີມ (ການປູກເຂົ້າ)**

ການປະຕິບັດເຕັກນິກການປູກເຂົ້າ




ຊ້າຍ : ວິທີທີ່ໂຄງການແນະນຳ
ຂວາ : ວິທີດັ່ງເດີມຂອງຊາວນາ

ຜົນຜະລິດເພີ່ມຂຶ້ນ (ລາຍຮັບເພີ່ມຂຶ້ນ)

**ດ້ານການຕະຫຼາດ**

ແນະນຳການປູກຜັກ ແລະ ການສົ່ງເສີມການຂາຍ





ຊ້າຍ : ຜະລິດຕະພັນພືດຜັກປອດໄພ
ຂວາ : ຂະຫຍາຍຊ່ອງທາງການຂາຍ

ສາມາດສ້າງແຫຼ່ງລາຍຮັບໃໝ່ໄດ້ແລ້ວ

**ດ້ານຊົນລະປະທານ**

ສ້າງຄວາມເຂັ້ມແຂງໃນການຈັດການນ້ຳ





ການສ້ອມແປງ ແລະ ການຂະຫຍາຍຄອງເໝືອງເພື່ອສະໜອງນ້ຳໃຫ້ກັບພື້ນທີ່ທ້າຍຄອງ

ເນື້ອທີ່ຊົນລະປະທານເພີ່ມຂຶ້ນ (ຜົນຜະລິດເພີ່ມຂຶ້ນ)

ສຽງຈາກຊາວນາ: ຍ້ອນວ່າພວກເຮົາມີໂອກາດເຮັດໃຫ້ລາຍຮັບເພີ່ມຂຶ້ນ....ດັ່ງນັ້ນ.

- ລາຍໄດ້ຈາກການຂາຍຜັກ, ຍັງສາມາດຊື້ອຸປະກອນການຮຽນໃຫ້ລູກໆໄດ້
- ກຳໄລທີ່ໄດ້ຈາກການຂາຍຜັກທຸກອາທິດ, ຂ້ອຍໄດ້ຊື້ສິ່ງຂອງໃຫ້ກັບລູກໆ
- ພວກເຮົາສາມາດຢືມເງິນຈາກທະນາຄານ ແລະ ດຶງໄຟຟ້າເຂົ້າຖຽງນາເພື່ອການປູກຝັງເພາະວ່າໃນອະນາຄົດພວກເຮົາຍັງຈະມີລາຍໄດ້ຈາກການປູກຝັງຢູ່.
- ຂ້ອຍໄດ້ມອບພື້ນທີ່ການຜະລິດໃຫ້ກັບຄອບຄົວເພາະວ່າດຽວນີ້ຂ້ອຍໄດ້ຮັບຜົນຜະລິດດີຂຶ້ນແລ້ວ ເຖິງແມ່ນວ່າເນື້ອທີ່ຂອງຂ້ອຍນ້ອຍກໍ່ຕາມ.

ພວກເຮົາພະຍາຍາມລວບລວມຜົນຮັບກິດຈະກຳຂອງໂຄງການຜ່ານການຕິດຕາມ! (ທີມປະເມີນ)









**ສະບັບຕໍ່ໄປ:** ຕໍ່ຈາກສະບັບນີ້, ພວກເຮົາຈະລາຍງານຜົນຮັບດີໆຂອງໂຄງການອື່ນໆອີກ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)